# ສຳເລັດກອງປະຊຸມຄົບຄະນະບໍລິຫານງານຊາວໜຸ່ມ ທຫລ ຄັ້ງທີ 3 ສະໄໝທີ VIII




ກອງປະຊຸມຄົບຄະນະບໍລິຫານງານຊາວໜຸ່ມ ທຫລ ຄັ້ງທີ 3 ສະໄໝທີ VIII ໄດ້ໄຂຂຶ້ນໃນຕອນບ່າຍຂອງວັນທີສຸກວັນທີ 29 ມັງກອນ 2021 ຢູ່ຫ້ອງປະຊຸມໃຫຍ່ຊັ້ນ 4 ຂອງ ທຫລ ພາຍໃຕ້ການເປັນປະທານຂອງ ສະຫາຍ ບຸນທະວີ ສຸກດາວົງ ເລຂາຄະນະບໍລິຫານງານຊາວໜຸ່ມ ທຫລ ໂດຍການເຂົ້າຮ່ວມຂອງຄະນະບໍລິຫານງານຊາວໜຸ່ມ ທຫລ ສະໄໝທີ VIII ແລະ ກອງເລຂາຄະນະບໍລິຫານງານຊາວໜຸ່ມ ທຫລ ສະໄໝທີ VIII ຢ່າງພ້ອມພຽງ.








ສະຫາຍເລຂາຄະນະບໍລິຫານງານຊາວໜຸ່ມ ທຫລ ໄດ້ເຜີຍແຜ່ມະຕິກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມທົ່ວປະເທດ ຄັ້ງທີ VIII ແລະ ສະຫາຍຮອງເລຂາຄະນະບໍລິຫານງານຊາວໜຸ່ມ ທຫລ ໄດ້ຜ່ານຮ່າງບົດສະຫຼຸບຕີລາຄາການເຄື່ອນໄຫວວຽກງານຊາວໜຸ່ມ ທຫລ ປະຈຳປີ 2020 ແລະ ທິດທາງແຜນການປະຈຳປີ 2021 ຕໍ່ທີ່ປະຊຸມ. ຫຼັງຈາກນັ້ນ, ຄະນະບໍລິຫານງານຊາວໜຸ່ມ ທຫລ ໄດ້ປະກອບຄຳຄິດຄຳເຫັນຕໍ່ບົດສະຫຼຸບຕີລາຄາການເຄື່ອນໄຫວວຽກງານຊາວໜຸ່ມ ທຫລ ປະຈຳປີ 2020 ແລະ ທິດທາງແຜນການປະຈຳປີ 2021 ຢ່າງສ້າງສັນ. ຫຼັງຈາກນັ້ນ, ກອງປະຊຸມໄດ້ເປັນເອກະພາບ ແລະ ປິດລົງໃນວັນດຽວກັນ.

**#ຂ່າວ ແລະ ພາບໂດຍ: ນາງ ປາໄນ ພັນທະລາ**

# ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ